IUCN

# ແຜນງານການປຶກສາຫາລືດ້ານຊັບພະຍາກອນນ້ຳ ໃນຂົງເຂດແມ່ນ້ຳຂອງ



MEKONG
WATER DIALOGUES

ULKOASIAINMINISTERIÖ
UTRIKESMINISTERIET

# ແຜນງານການປຶກສາຫາລືດ້ານຊັບພະຍາກອນນ້ຳ ໃນຂົງເຂດແມ່ນ້ຳຂອງ



Can Tho, Viet Nam © Ganesh Pangare

> "ໂດຍຜ່ານແຜນງານປຶກສາຫາລື ດ້ານຊັບພະຍາກອນນ້ຳໃນຂົງເຂດແມ່ນ້ຳຂອງ, ປະຊາຊົນທຸກພາກສ່ວນ ໃນສັງຄົມ ໄດ້ມີໂອກາດເຂົ້າຮ່ວມໃນການຕັດສິນ ບັນຫາທີ່ສຳຄັນທີ່ກ່ຽວຂ້ອງກັບຊັບພະຍາ ກອນນ້ຳເພື່ອ ປັບປຸງຄຸນນະພາບ ຊີວິດຂອງພວກເຂົາເຈົ້າ ແລະ ການປົກປັກຮັກສາສິ່ງແວດລ້ອມໃຫ້ດີຂຶ້ນ."

ທ່ານ ຟາມ ກຸກ ຮັງ, ກົມຊັບພະຍາກອນນ້ຳ,
ກະຊວງ ກະສິກຳ ແລະ ພັດທະນາ ຊົນນະບົດ, ຫວຽດນາມ

## ຄວາມເປັນມາ

ຂົງເຂດແມ່ນ້ຳຂອງກວມເອົາພື້ນທີ່ຂອງຈີນ, ກຳປູເຈຍ, ສປປ ລາວ, ມຽນມາ, ໄທ ແລະ ຫວຽດນາມ. ໄທ ແລະ ຫຼຽດນາມ ເປັນໜຶ່ງໃນບັນດາປະເທດທີ່ມີການເຕີບໂຕ ດ້ານເສດຖະກິດໄວທີ່ສຸດໃນໂລກ. ໃນຈຳນວນ ປະຊາກອນ ທັງໝົດ 300 ລ້ານຄົນ ທີ່ອາໄສໃນຂົງເຂດນີ້, ມີ 100 ລ້ານຄົນຍຶດອາຊີບເປັນຊາວປະມົງ ແລະ ການເກັບກ່ຽວ ຜະລິດຕະພັນອື່ນໆທີ່ໄດ້ຈາກ ລະບົບສາຍນ້ຳຫລັກຕ່າງໆ - ແມ່ຂອງ-ລ້ານຊ້າງ, ນູ-ສາລະວິນ, ແມ່ນ້ຳ ຢາງຊີ ຕອນເທິງ, ແມ່ນ້ຳ ອີຣະວະດີ, ແມ່ນ້ຳ ເຈົ້າພະຍາ, ແມ່ນ້ຳ ແດງ. ພ້ອມດຽວກັນນີ້, ການນຳໃຊ້ ຊັບພະຍາກອນນ້ຳໃນທາງ ການຄ້າ, ການພັດທະນາໂຄງລ່າງພື້ນຖານດ້ານຊັບພະຍາ ກອນນ້ຳ ແລະ ມົນລະພິດ ທາງນ້ຳ ກໍ່ເພີ່ມຂຶ້ນຢ່າງໄວວາ.

ແຜນງານການປຶກສາຫາລືດ້ານຊັບພະຍາກອນນ້ຳໃນຂົງເຂດແມ່ນ້ຳຂອງ (MRWD) ໂດຍແມ່ນອົງການອະນຸລັກທຳມະຊາດສາກົນ (IUCN) ເປັນເຈົ້າການປະສານງານໃນການຈັດຕັ້ງປະຕິບັດ ແລະ ກະຊວງການຕ່າງປະເທດຂອງຟິນແລນເປັນຜູ້ສະໜັບສະໜູນນັ້ນໄດ້ມີການລິເລີ່ມດຳເນີນງານກັບປະເທດ ກຳປູເຈຍ, ສປປ ລາວ, ໄທ ແລະ ຫວຽດນາມ ເພື່ອປັບປຸງການປົກຄອງດ້ານຊັບພະຍາກອນນ້ຳໂດຍ ອຳນວຍໃຫ້ມີການຕັດສິນບັນຫາຢ່າງໂປ່ງໃສ ແລະ ທີ່ຖ້ວນ ແນໃສ່ເພື່ອປັບປຸງສະເຖລະພາບໃນການດຳລົງຊີວິດລວມທັງຄຸນນະພາບຂອງຄົນ ແລະ ລະບົບນິເວດ ໃຫ້ຍັງຄົງສະພາບດີ. ແຜນງານນີ້ ໄດ້ສ້າງໂອກາດ ໃຫ້ແກ່ ລັດຖະບານ, ຂະແໜງການ ເອກະຊົນ ແລະ ຜູ້ຕາງໜ້າຂອງ ພາກສ່ວນສັງຄົມທີ່ສຳຄັນ ໃນຂົງເຂດ ໄດ້ເຂົ້າຮ່ວມ ໃນການປຶກສາຫາລື ແລະ ຊ່ວຍເສີມສ້າງໃຫ້ຄວາມຕ້ອງການໃນດ້ານຕ່າງໆ ທີ່ມີຄວາມແຕກຕ່າງກັນກ່ຽວກັບການພັດທະນາ ຊັບພະຍາກອນນ້ຳ ໄດ້ຮັບການພິຈາລະນາ.

## ຈຸດມຸ່ງໝາຍ

ເປົ້າໝາຍຂອງ ແຜນງານນີ້ ແມ່ນເພື່ອ ສ້າງຄວາມໝັ້ນຄົງດ້ານການດຳລົງຊີວິດ ຂອງ ຄົນ ແລະ ຄວາມອຸດົມສົມບູນຂອງ ລະບົບນິເວດ ໃນ ຂົງເຂດ ແມ່ນ້ຳຂອງ ໂດຍຜ່ານການເຂົ້າຮ່ວມ ໃນ ການປົກຄອງ ຊັບພະຍາກອນນ້ຳ. ຈຸດມຸ່ງໝາຍ ຂອງ ແຜນງານນີ້ ແມ່ນເພື່ອອຳນວຍໃຫ້ບັນດາຜູ້ມີສ່ວນຮ່ວມ, ລວມທັງ ບັນດາອົງການຈັດຕັ້ງຂອງ ລັດຖະບານ, ຊຸມຊົນ, ປັນຍາຊົນ ແລະ ຂະແໜງການ ເອກະຊົນ, ໄດ້ເຂົ້າຮ່ວມ ໃນ ການຕັດສິນບັນຫາທີ່ກ່ຽວຂ້ອງກັບ ການຄຸ້ມຄອງ ຊັບພະຍາກອນນ້ຳ.

## ຂັ້ນຕອນ

ຂັ້ນຕອນ ດຳເນີນງານ ແມ່ນໄດ້ດຳເນີນ ໂດຍ ການສ້າງຂະບວນການ ທີ່ບັນດາປະເທດ ໃນຂົງເຂດ ມີຄວາມເປັນເຈົ້າການ ເພື່ອ ນຳໄປສູ່ ການປຶກສາຫາລື ໃນລະດັບຂົງເຂດ ຊຶ່ງ ຈະຊ່ວຍໃຫ້ມີ ການລະດົມ ຂ່າວສານ ແລະ ຄວາມຮູ້, ມີການເຂົ້າຮ່ວມ ຂອງພາກສ່ວນຕ່າງໆ ຫລາຍຂຶ້ນ, ແລະ ມີຄວາມເພິ່ງພໍໃຈ ຕໍ່ບັນຫາ ທີ່ມີລັກສະນະຮ່ວມກັນ ໃນ ຂົງເຂດ.

ໜ່ວຍງານ ວິຊາການ ແຫ່ງຊາດ (NWGs) ໄດ້ຖືກສ້າງຕັ້ງຂຶ້ນ ເພື່ອເປັນຕົວຕັ້ງຕົວຕີ ໃນ ການຈັດຕັ້ງປະຕິບັດແຜນງານ ໃນແຕ່ລະປະເທດ. ສະມາຊິກ ໜ່ວຍງານວິຊາການ ແຫ່ງຊາດ ຂອງ ແຕ່ລະປະເທດ ມີຈຳນວນ 10 ທ່ານຊຶ່ງ ເປັນຜູ້ຕາງໜ້າ ຈາກ ອົງການຈັດຕັ້ງ ຂອງລັດຖະບານ, ຂະແໜງການ ເອກະຊົນ, ຜູ້ໃຫ້ທຶນ, ແລະ ສະຖາບັນ ຄົ້ນຄວ້າຕ່າງໆ. ໜ່ວຍງານ ວິຊາການ ແຫ່ງຊາດຍັງປະກອບດ້ວຍ ຜູ້ຕາງໜ້າ ຈາກ ພາກສ່ວນທີ່ຮັບຜິດຊອບກ່ຽວກັບ ບົດບາດຍິງຊາຍ ແລະ ຊົນຊາດຊົນເຜົ່າ. ໜ່ວຍງານວິຊາການ ແຫ່ງຊາດ ໄດ້ສ້າງ ວາລະ ການຈັດຕັ້ງ ການປຶກສາຫາລື ໃນລະດັບຊາດ ແລະ ອຳນວຍໃຫ້ມີ ການເຊື່ອມໂຍງ ກັບ ຜູ້ສ້າງນະໂຍບາຍຕ່າງໆ. ແຜນງານ ການປຶກສາຫາລື ດ້ານຊັບພະຍາກອນນ້ຳ ໃນ ຂົງເຂດ ແມ່ນ້ຳຂອງກຳລັງລິເລີ່ມ ການປຶກສາຫາລື, ການສຶກສາຄົ້ນຄວ້າ ແລະ ການຈັດຕັ້ງ ອົງການ ອ່າງແມ່ນ້ຳ, ການປົກຄອງ ຊັບພະຍາກອນນ້ຳ ຂ້າມຜ່ານຊາຍແດນ, ດິນບໍລິເວນນ້ຳ ແລະ ການຊົນລະປະທານ ໂດຍສຸມໃສ່ ບັນຫາ ທີ່ເກີດຈາກ ການປ່ຽນຂອງ ດິນຟ້າອາກາດ ຊຶ່ງຖືວ່າ ເປັນບັນຫາ ທີ່ມີລັກສະນະຂ້າມຜ່ານຂະແໜງການ. ແຜນງານ ປຶກສາຫາລື ໃນຂົງເຂດແມ່ນ້ຳຂອງ ມີບົດບາດ ທີ່ສຳຄັນ ໃນ ການນຳເອົາ ຜູ້ຕາງໜ້າທີ່ສຳຄັນ ຂອງປະເທດ ເຂົ້າໃນ ເວທີປຶກສາຫາລື, ການຖົກຖຽງບັນຫາຕ່າງໆ ແລະ ການນຳໄປສູ່ ການດຳເນີນງານໃນລະດັບພາກພື້ນ.

The Mekong River Basin





# ບຸລິມະສິດ

ແຜນງານ ປຶກສາຫາລື ໃນ ຂົງເຂດ ແມ່ນ້ຳຂອງ ສຸມໃສ່ ບຸລິມະສິດຕ່າງໆ ທີ່ໄດ້ກຳນົດ ໃນ ເອກະສານ ການວິໄຈສະພາບ (Situational Analysis Studies), ຊຶ່ງ ຈະໄດ້ມີ ການປຶກສາຫາລື, ຖົກຖຽງ ແລະ ໃຫ້ສະຕະຍາບັນ ໃນກອງປະຊຸມ ຂອງ ໜ່ວຍງານ ວິຊາການ ແຫ່ງຊາດ ຂອງ ແຕ່ລະປະເທດ ໃນຂັ້ນຕໍ່ໄປ.

## ອົງການຈັດຕັ້ງ ອ່າງແມ່ນ້ຳ

ການປ່ຽນແປງ ຈາກ ວິທີການ ຄຸ້ມຄອງ ຊັບພະຍາກອນນ້ຳ ຕາມຂະແໜງການ ມາເປັນ ການຄຸ້ມຄອງ ຊັບພະຍາກອນ ດັ່ງກ່າວ ແບບປະສົມປະສານ, ທັງສີ່ປະເທດ ໄດ້ມີການລິເລີ່ມ ສ້າງຕັ້ງ ອົງການ ອ່າງແມ່ນ້ຳ. ອົງການ ອ່າງແມ່ນ້ຳ ໄດ້ເລັງໃສ່ ການກຳນົດ ບັນຫາ ລະຫວ່າງ ຕົ້ນນ້ຳ ແລະ ທ້າຍນ້ຳ, ການພົວພັນ ລະຫວ່າງ ນ້ຳໜ້າດິນ ແລະ ນ້ຳໃຕ້ດິນ, ການຂາດແຄນນ້ຳ, ຄຸນນະພາບນ້ຳ ແລະ ການຈັດສັນນ້ຳ. ບົດບາດ ຂອງ ອົງການ ເຫລົ່ານີ້ ແມ່ນປະສານງານ ກັບ ບັນດາກະຊວງ, ອົງການຈັດຕັ້ງ ແລະ ຫົວໜ່ວຍ ບໍລິຫານ ຕ່າງໆ ຂອງລັດ. ການເຂົ້າຮ່ວມ ຂອງ ຊຸມຊົນ ທ້ອງຖິ່ນ ແມ່ນມີໜ້ອຍຫລາຍ, ຍົກເວັ້ນ ຢູ່ ປະເທດໄທ ຊຶ່ງ ໄດ້ມີ ຄວາມພະຍາຍາມ ຈຳນວນໜຶ່ງ ເພື່ອ ອຳນວຍໃຫ້ ຊາວກະສິກອນ ໄດ້ເຂົ້າຮ່ວມ ໃນ ການຕັດສິນບັນຫາ. ເພື່ອແກ້ໄຂ ບັນຫາເຫລົ່ານີ້, ການເຂົ້າຮ່ວມ ຂອງ ຊຸມຊົນ ໃນ ກົນໄກ ຂອງ ອົງການ ອ່າງແມ່ນ້ຳ ຖືວ່າ ເປັນຈຸດສຸມ ຂອງ ແຜນງານ ປຶກສາຫາລື ໃນ ຂົງເຂດ ແມ່ນ້ຳຂອງ.

## ດິນບໍລິເວນນ້ຳ

ໜຶ່ງ ໃນ ບັນຫາໃຫຍ່ ກ່ຽວກັບ ການຄຸ້ມຄອງ ດິນບໍລິເວນນ້ຳ ໃນ ຂົງເຂດ ແມ່ນ້ຳຂອງ ແມ່ນ ສິດທິ ໃນ ການນຳໃຊ້ ລະບົບນິເວດ ຂອງ ຜູ້ນຳໃຊ້ ຊັບພະຍາກອນ ດິນບໍລິເວນນ້ຳ ທີ່ມີມາແຕ່ດັ້ງເດີມ ບໍ່ຖືກຮັບຮູ້. ດັ່ງນັ້ນ ພວກເຂົາເຈົ້າ ຈຶ່ງບໍ່ໄດ້ເຂົ້າຮ່ວມ ໃນ ການຄຸ້ມຄອງ ຊັບພະຍາກອນ ດິນບໍລິເວນນ້ຳ ຢ່າງເໝາະສົມ. ທຸກປະເທດ ໃນຂົງເຂດ ແມ່ນ້ຳຂອງ ຕອນລຸ່ມ ຈຳເປັນຕ້ອງມີ ນະໂຍບາຍ ທີ່ຈະແຈ້ງ ຕໍ່ກັບ ບັນຫາ ດ້ານດິນບໍລິເວນນ້ຳ ທີ່ສຳຄັນ ແລະ ນິຕິກຳ ທີ່ອຳນວຍໃຫ້ມີ ການຄຸ້ມຄອງ ແລະ ປົກປັກຮັກສາ ດິນບໍລິເວນນ້ຳ ນ້ຳຈືດ ໂດຍອີງໃສ່ ຊຸມຊົນ. ທັງສອງປັດໄຈ ດັ່ງກ່າວ ເປັນສິ່ງສຳຄັນ ເພື່ອສ້າງ ຂອບເຂດໜ້າວຽກ ໃຫ້ແກ່ ການດຳເນີນ ກິດຈະກຳ ຄຸ້ມຄອງ ດິນບໍລິເວນນ້ຳ ໃນ ພາກສະໜາມ. ແຜນງານ ການປຶກສາຫາລື ດ້ານ ຊັບພະຍາກອນນ້ຳ ໃນ ຂົງເຂດ ແມ່ນ້ຳຂອງ ຮ່ວມງານກັບ ຄະນະກຳມາທິການ ແມ່ນ້ຳຂອງ ສາກົນ ແລະ ກອງເລຂາ ສົນທິສັນຍາ ຣາໍຊາ.


Rice planting, Southeast Asia © Mayumi Terao

“ແມ່ນ້ຳຂອງ ມີຄວາມໝາຍ ແລະ ຄວາມຄາດຫວັງ ຫລາຍຢ່າງ ສຳລັບ ແຕ່ລະຄົນ. ສຳລັບ ຊາວປະມົງ, ແມ່ນ້ຳ ແມ່ນມີຄວາມສຳຄັນ ສຳລັບ ການປະມົງ, ແຕ່ ສຳລັບ ຊາວກະສິກອນ, ແມ່ນ້ຳ ແມ່ນມີຄວາມສຳຄັນ ສຳລັບ ການຊົນລະປະທານ.”

ທ່ານ ສັນສິນທິ ບຸນຍົດຖາຍັນ, ໄທ.

## ຊົນລະປະທານ

ການກະສິກຳ ໄດ້ປະກອບສ່ວນ ອັນສຳຄັນ ຕໍ່ ພື້ນຖານ ການດຳລົງຊີວິດ ຂອງ ປະຊາຊົນ ທ້ອງຖິ່ນ ແລະ ເສດຖະກິດ ແຫ່ງຊາດ ຂອງ ທັງສີ່ປະເທດ ໃນ ຂົງເຂດ ແມ່ນ້ຳຂອງ. ຊົນລະປະທານ ເປັນພຽງ ຂະແໜງການດຽວ ທີ່ນຳໃຊ້ນ້ຳ ຢ່າງມະຫາສານ ໃນ ຂົງເຂດ. ຂະແໜງການ ຊົນລະປະທານ ຍັງຖືກກະທົບ ຈາກ ບັນຫາ ການຈັດຕັ້ງ ຊົນນະບົດ ທີ່ອ່ອນແອ, ຂາດແຄນ ຜູ້ສະໜອງ ການບໍລິການ ແລະ ການເຂົ້າຮ່ວມ ຂອງ ຊາວກະສິກອນ ໃນ ການວາງແຜນ ແລະ ຄຸ້ມຄອງ ລະບົບ ຊົນລະປະທານ ຍັງມີຈຳກັດ. ທັງໝົດເຫລົ່ານີ້ ສ່ວນໃຫຍ່ ແມ່ນເກີດຈາກ ສະພາບ ດ້ານນິຕິກຳ ຂອງ ອົງການຈັດຕັ້ງ ຊາວກະສິກອນ ທີ່ອ່ອນແອ ຊຶ່ງ ພາໃຫ້ຂາດ ກົນໄກ ກະຕຸກຊຸກຍູ້ໃຫ້ ຊາວກະສິກອນ ໄດ້ເຂົ້າຮ່ວມ. ການປະຕິຮູບ ນະໂຍບາຍ ຂອງຂະແໜງການນີ້ ໃນໄລຍະຜ່ານມາ ກໍ່ບໍ່ໄດ້ຍົກເອົາ ບັນຫາ ສິດທິຕໍ່ນ້ຳ, ນິຍາມ ກ່ຽວກັບ ສິດທິ, ບົດບາດ ແລະ ຄວາມຮັບຜິດຊອບ ຂອງ ລັດ ແລະ ຜູ້ນຳໃຊ້ ຂຶ້ນມາ ຢ່າງພຽງພໍເທື່ອ. ຄວາມເຂົ້າໃຈ ກ່ຽວກັບ ນະໂຍບາຍ ແລະ ກົດໝາຍ ຂອງ ບັນດາຜູ້ມີສ່ວນຮ່ວມຕ່າງໆ ຍັງມີຈຳກັດ.

## ການປ່ຽນແປງ ຂອງ ດິນຟ້າອາກາດ

ສາມລ່ຽມ ແມ່ນ້ຳຂອງ ແລະ ສ່ວນໃຫຍ່ ຂອງ ສປປ ລາວ ແລະ ກຳປູເຈຍ ທີ່ຖືກຈັດໂດຍ ສະພາທີ່ປຶກສາ ລະຫວ່າງລັດຖະບານ ກ່ຽວກັບ ການປ່ຽນແປງ ຂອງ ດິນຟ້າອາກາດ (IPCC) ວ່າ ເປັນເຂດ ທີ່ມີຄວາມອ່ອນໄຫວ ຕໍ່ ການປ່ຽນແປງ ຂອງ ດິນຟ້າອາກາດ. ຂົງເຂດ ດັ່ງກ່າວ ສະໜັບສະໜູນ ລະບົບນິເວດ ຫລາຍຢ່າງ ຊຶ່ງ ມີຄວາມອ່ອນໄຫວຫລາຍ ຕໍ່ ຜົນກະທົບ ຂອງ ດິນຟ້າອາກາດ, ລວມທັງເຂດທີ່ໄດ້ຮັບນ້ຳ ຈາກ ການລະລາຍ ຂອງນ້ຳກ້ອນເທິງພູ, ລະບົບນິເວດ ເຂດ ທີ່ຢູ່ລະດັບສູງ, ດິນບໍລິເວນນ້ຳ ແລະ ລະບົບນິເວດ ນ້ຳຈືດ, ເຂດ ແຄມຝັ່ງທະເລ ທີ່ມີລະດັບຕ່ຳ ແລະ ເຂດ ປະກາລັງ. ຍຸດທະສາດ ການປ່ຽນແປງ ຂອງ ດິນຟ້າອາກາດ ທີ່ປະສົບຜົນສຳເລັດ ແລະ ຍືນຍົງທີ່ສຸດນັ້ນ ແມ່ນ ການຫລຸດຜ່ອນ ຄວາມສ່ຽງ ທີ່ເກີດຈາກປັດໄຈຕ່າງໆ ໃນ ປະຈຸບັນ ໄປຄຽງຄູ່ກັບ ການແກ້ໄຂ ຜົນກະທົບ ຂອງ ດິນຟ້າອາກາດ ໃນອະນາຄົດ. ແຜນງານ ການປຶກສາຫາລືດ້ານຊັບພະຍາກອນນ້ຳ ໃນ ຂົງເຂດ ແມ່ນ້ຳຂອງ ໄດ້ຍົກເອົາ ບັນຫາ ການປ່ຽນແປງ ຂອງ ດິນຟ້າອາກາດຂຶ້ນມາ ໂດຍນຳເອົາ ຍຸດທະສາດ ການປັບຕົວ ຕໍ່ ການປ່ຽນແປງ ດັ່ງກ່າວເຂົ້າໃນ ວຽກງານ ຂອງ ອົງການ ອ່າງແມ່ນ້ຳ, ການປົກຄອງ ດິນບໍລິເວນນ້ຳ ແລະ ຊົນລະປະທານ.

# ພື້ນຖານ ດ້ານຄວາມຮູ້ ເພື່ອ ການດຳເນີນງານ

ບັນດາຜົນຜະລິດ ດ້ານຄວາມຮູ້ ແລະ ສິ່ງພິມຕ່າງໆ ຂອງ ແຜນງານ ການປຶກສາຫາລື ໃນຂົງເຂດ ແມ່ນ້ຳຂອງ ເປັນພື້ນຖານ ຂໍ້ມູນ-ຂ່າວສານ ແລະ ການວິໄຈ ທີ່ສຳຄັນ ຊຶ່ງ ຜູ້ມີສ່ວນຮ່ວມຕ່າງໆ ຈຳເປັນຕ້ອງ ສ້າງ ຍຸດທະສາດ ແລະ ໜ້າວຽກ ທີ່ມີປະສິດທິພາບ ເພື່ອເຮັດໃຫ້ ການຄຸ້ມຄອງ ຊັບພະຍາກອນນ້ຳ ໃນຂົງເຂດ ແມ່ນ້ຳຂອງ ມີຄວາມ ຍຸດຕິທຳ ແລະ ຍືນຍົງ.




“ມັນເປັນສິ່ງສຳຄັນ ສຳລັບ ພວກເຮົາ ທີ່ຕ້ອງຮູ້ວ່າ ກິດຈະກຳ ການພັດທະນາ ຕາມລຳແມ່ນ້ຳຂອງ ໄດ້ສ້າງຜົນກະທົບ ຕໍ່ ກຳປູເຈຍ ໂດຍທົ່ວໄປ ແລະ ຕໍ່ ຕົງເລສາບ ໂດຍສະເພາະ ຄືແນວໃດ”.

ພະນະທ່ານ ສາວ ໂສພຽບ, ອະດີດ ຮອງເລຂາທິການໃຫຍ່, ອົງການ ຕົງເລສາບ, ກຳປູເຈຍ

### ສີພັນດອນ

ແມ່ນນ້ຳຂອງ ຢູ່ພາຍໃຕ້ ໄພຂົ່ມຂູ່. ເອກະສານ ຮູບພາບນີ້ ສຳຫລວດ ສີພັນດອນ ຊຶ່ງ ໄດ້ກວມເອົາ ຊ່ວງໜຶ່ງ ທີ່ໜ້າ ຈັບໃຈ ຂອງ ລຳແມ່ນ້ຳຂອງ ທີ່ມີຄວາມຍາວ 50 ກິໂລແມັດ. ເອກະສານ ດັ່ງກ່າວ ໄດ້ໃຫ້ທັດສະນີຍະພາບ ແລະ ຂໍ້ມູນ ທີ່ຈະແຈ້ງ ຜ່ານ ບັນດາຄອງນ້ຳ, ເກາະດອນ ແລະ ຖິ່ນ ທີ່ຢູ່ອາໄສຂອງສັດແລະພືດ ຕາມສາຍນ້ຳ ທີ່ຖືກນ້ຳຖ້ວມ ຕາມລະດູການ ແລະ ນ້ຳຕົກຕາດ ທີ່ໃຫຍ່ທີ່ສຸດ ໃນ ອາຊີ.

### ການປົກຄອງ ຊັບພະຍາກອນນ້ຳ

ບົດລາຍງານ ທີ່ມີລັກສະນະສັງລວມນີ້ ລາຍງານ ບັນຫາ ຕົ້ນຕໍ ໃນ ການປົກຄອງ ຊັບພະຍາກອນນ້ຳ ຢູ່ ກຳປູເຈຍ, ສປປ ລາວ ແລະ ຫວຽດນາມ, ລວມທັງ ບັນຫາ ສະເພາະ ຂອງ ແຕ່ລະປະເທດ, ກໍຄື ບັນຫາ ທີ່ມີລັກສະນະຄ້າຍຄືກັນ ຂອງ ບັນດາປະເທດ ເຫລົ່ານັ້ນ. ໄດ້ມີ ການໃຫ້ຂໍ້ສະເໜີ ແນະ ໃນ ການປັບປຸງ, ລວມທັງ ຂໍ້ສະເໜີ ຫົວຂໍ້ ບູລິມະສິດ ຕ່າງໆ ເພື່ອ ນຳເຂົ້າສູ່ ການປຶກສາຫາລື ໃນລະດັບຊາດ ແລະ ລະດັບ ພາກພື້ນ ໃນ ອະນາຄົດ.

### ການສືບຄົ້ນຫາ ອະນາຄົດ ຂອງ

ຊັບພະຍາກອນນ້ຳ ຮ່ວມກັນ ການປຶກສາຫາລື ດ້ານຊັບ ພະຍາກອນນ້ຳ ໃນຂົງເຂດ ແມ່ນ້ຳຂອງ, 6 - 7 ກໍລະກົດ 2006, ນະຄອນຫລວງ ວຽງຈັນ, ສປປ ລາວ.

### ແຜນງານ ປຶກສາຫາລື ດ້ານຊັບພະຍາກອນນ້ຳ ໃນຂົງເຂດ ແມ່ນ້ຳຂອງ

ການຮວບຮວມ ເອກະສານ ແລະ ບົດສະເໜີຕ່າງໆ ຈາກ ການປຶກສາຫາລື ດ້ານຊັບພະຍາກອນນ້ຳ ໃນຂົງເຂດ ແມ່ນ້ຳຂອງ: ການສືບຄົ້ນຫາ ອະນາຄົດ ຂອງ ຊັບພະຍາ ກອນນ້ຳ ຮ່ວມກັນ, 6 - 7 ກໍລະກົດ 2006, ນະຄອນ ຫລວງ ວຽງຈັນ, ສປປ ລາວ.

### ການປົກຄອງ ດິນບໍລິເວນນ້ຳ ໃນ ສາມລ່ຽມ ແມ່ນ້ຳຂອງ ຢູ່ ຫວຽດນາມ

ບັນດານັກວິທະຍາສາດ ແລະ ຜູ້ຄຸ້ມຄອງ ດິນບໍລິເວນນ້ຳ ຈາກ ມະຫາວິທະຍາໄລ ຄັນເທີ້ ປະເມີນ ສະພາບ ຂອງ ດິນບໍລິເວນນ້ຳ, ຜົນສຳເລັດ ແລະ ສິ່ງທ້າທາຍຕ່າງໆ ໃນ ການຄຸ້ມຄອງ ດິນບໍລິເວນນ້ຳ ແລະ ການໃຫ້ຂໍ້ສະເໜີ ແນະ ຕໍ່ ການວາງນະໂຍບາຍ.

### ນ້ຳໄຫລລົງ: ອ່າງແມ່ນ້ຳ ຕົງເລສາບ

ໂອກາດຕ່າງໆ ສຳລັບ ໂຄງການ ທີ່ເອື້ອອຳນວຍໃຫ້ມີ ການອະນຸລັກ ແລະ ຄຸ້ມຄອງ ທະເລສາບໃຫຍ່ ຂອງ ກຳປູເຈຍ. ເປັນພື້ນຖານ ຮັບໃຊ້ໃຫ້ແກ່ ການປຶກສາຫາລື ແລະ ການຕັດສິນບັນຫາ ກ່ຽວກັບວ່າ ຈະມີ ການຄຸ້ມຄອງ ບັນດາໂຄງການຕ່າງໆ ຄືແນວໃດ ໃນ ອະນາຄົດ ເພື່ອ ຮັບປະກັນ ການປົກປັກຮັກສາ ລະບົບນິເວດ ອັນມີຄຸນຄ່ານີ້ໄວ້ ໃນໄລຍະຍາວ.

For more, visit our website at: www.iucn.org/asia/mekong_dialogues

---

## ບ່ອນຕິດຕໍ່

ເພື່ອຮູ້ຈັກກັບ ແຜນງານ ການປຶກສາຫາລື ດ້ານຊັບພະຍາກອນນ້ຳ ໃນຂົງເຂດ ແມ່ນ້ຳຂອງ ຫລາຍຂຶ້ນ ແລະ ເພື່ອຊອກຮູ້ວ່າ ທ່ານ ຫລື ອົງການຈັດຕັ້ງຂອງທ່ານ ຈະສາມາດເຂົ້າຮ່ວມ ໃນ ແຜນງານ ດັ່ງກ່າວ ໄດ້ຄືແນວໃດ, ກະລຸນາຕິດຕໍ່ ພວກເຮົາ ຕາມທີ່ຢູ່ ດັ່ງລຸ່ມນີ້:


### ຂົງເຂດ ອາຊີ

ນ້ຳ ແລະ ດິນບໍລິເວນນ້ຳ
ຫ້ອງການ IUCN ປະຈຳຂົງເຂດ ອາຊີ
63 ສຸຂຸມວິດ ຊອຍ 39
10110 ວັດທະນາ, ບາງກອກ
ປະເທດໄທ
ໂທ: +66 2 662 4029
ແຟກ: +66 2 662 4387
ອີແມລ: mwd@iucn.org

### ກຳປູເຈຍ

IUCN ກຳປູເຈຍ
#19 ຖະໜົນ 312
ສັງກາດ ຕົງເລ ບາສັກ
ຄັນ ຈຳກາຣມອນ
ພະນົມເປັນ, ກຳປູເຈຍ
ຕູ້ ປ.ນ. 1504
ໂທ: +855 023 222 311
ແຟກ: +855 023 222 312
ອີແມລ:  mwdcambodia@iucn.org

### ສປປ ລາວ

IUCN ສປປ ລາວ
082/01 ຖະໜົນ ຟ້າງຸ່ມ
ບ້ານ ວັດຈັນ
ນະຄອນຫລວງ ວຽງຈັນ, ສປປ ລາວ
ຕູ້ ປ.ນ.: 4340
ໂທ: +856 21 216 401
ແຟກ: +856 21 216 127
ອີແມລ: mwdlao@iucn.org

### ໄທ

IUCN ປະເທດໄທ
63 ສຸຂຸມວິດ ຊອຍ 39
ວັດທະນາ,10110 ບາງກອກ
ປະເທດໄທ
ໂທ: +66 2 662 4029
ແຟກ: +66 2 662 4388
ອີແມລ: mwdthailand@iucn.org

### ຫວຽດນາມ

IUCN ຫວຽດນາມ
ວິນລາ 44/4 ຖະໜົນ ວານ ບາວ
ບາດິນ, ຮ່າໂນ້ຍ, ຫວຽດນາມ
ໂທ: +84 4 726 1575
ແຟກ: +84 4 726 1561
ອີແມລ: mwdvietnam@iucn.org

IUCN Asia Regional Office
63 Sukhumvit Soi 39
Wattana, Bangkok 10110
Thailand

Tel: + 66 2 662 4029
Fax: + 66 2 662 4387
Email: mwd@iucn.org

www.iucn.org/asia/mekong_dialogues

International Union for Conservation of Nature

